ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 174 /ລບ

ນະຄອນຫຼວງວຽງຈັນ, ວັນທີ 31 ມິຖຸນາ 2022

# ດຳລັດ
# ວ່າດ້ວຍ ການຂ້າສັດ, ທຳລາຍຊາກສັດ ແລະ ການຊົດເຊີຍ

- ອີງຕາມ ກົດໝາຍ ວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍ ການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ໜັງສືສະເໜີຂອງ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0961/ກປ, ລົງວັນທີ 28 ມີນາ 2022.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານ ຂ້າສັດ, ທຳລາຍຊາກສັດ ແລະ ຊົດເຊີຍ ເພື່ອຄວບຄຸມການລະບາດຂອງພະຍາດສັດ ແລະ ຊົດເຊີຍຄວາມເສຍຫາຍ ຈາກການຂ້າ ແລະ ທຳລາຍຊາກສັດ ໃຫ້ແກ່ເຈົ້າຂອງສັດ ແນໃສ່ ຕັດວົງຈອນການລະບາດຂອງພະຍາດສັດ ບໍ່ໃຫ້ແຜ່ລະບາດອອກສູ່ວົງກວ້າງ ແລະ ບໍ່ໃຫ້ເກີດຜົນກະທົບຮ້າຍແຮງຕໍ່ເສດຖະກິດ, ສັງຄົມ, ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ.

**ມາດຕາ 2 ການຂ້າສັດ, ທຳລາຍຊາກສັດ ແລະ ການຊົດເຊີຍ**

ການຂ້າສັດ ແລະ ທຳລາຍຊາກສັດ ແມ່ນ ການນຳໃຊ້ວິທີການທາງດ້ານວິຊາສະເພາະ ທີ່ເຮັດໃຫ້ສັດຕາຍ ແລະ ກຳຈັດຊາກສັດ ຕາມຫຼັກວິຊາການ ໂດຍສອດຄ່ອງກັບຄຳແນະນຳ ຂອງອົງການສຸຂະພາບສັດສາກົນ.

ການຊົດເຊີຍ ແມ່ນ ການທົດແທນ ຫຼື ບັນເທົາຄວາມເສຍຫາຍ ຈາກລັດ ດ້ວຍຮູບການເປັນເງິນ, ແນວພັນສັດ, ແນວພັນຫຍ້າ ຫຼື ປະຕິບັດນະໂຍບາຍອື່ນ ຕາມຄວາມເໝາະສົມ ໃຫ້ແກ່ເຈົ້າຂອງສັດ ທີ່ຖືກຜົນກະທົບ ຈາກການຂ້າ ແລະ ທຳລາຍຊາກສັດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສັດ** ໝາຍເຖິງ ງົວ, ຄວາຍ, ໝູ, ແກະ, ແບ້, ສັດປີກ, ສັດນ້ຳ ແລະ ສັດອື່ນ ທີ່ຕິດພະຍາດສັດທີ່ຈຳເປັນຕ້ອງແຈ້ງ ຕາມການກຳນົດຂອງກະຊວງກະສິກຳ ແລະ ປ່າໄມ້ ໃນແຕ່ລະໄລຍະ;
2. **ເຂດແດງ** ໝາຍເຖິງ ບໍລິເວນພື້ນທີ່ ທີ່ເກີດການລະບາດຂອງພະຍາດສັດ ໃນວົງລັດສະໝີທີ່ແຕກຕ່າງກັນ ຕາມການກຳນົດຂອງອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ການສັດຕະວະແພດ;
3. **ເຈົ້າຂອງສັດ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຫຼັກຖານຢັ້ງຢືນວ່າ ສັດທີ່ຖືກຂ້າ ຫຼື ຖືກທຳລາຍຊາກສັດນັ້ນ ເປັນກຳມະສິດຂອງຕົນຢ່າງຖືກຕ້ອງ ຕາມກົດໝາຍ.

**ມາດຕາ 4 ຫຼັກການ ກ່ຽວກັບວຽກງານ ຂ້າສັດ, ທຳລາຍຊາກສັດ ແລະ ຊົດເຊີຍ**

ວຽກງານ ຂ້າສັດ, ທຳລາຍຊາກສັດ ແລະ ຊົດເຊີຍ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບນະໂຍບາຍ, ກົດໝາຍ, ລະບຽບການ ແລະ ມາດຕະຖານ ທີ່ກ່ຽວຂ້ອງ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນ ຄວາມປອດໄພ ຕໍ່ສຸຂະພາບຂອງ ຄົນ, ສັດ ແລະ ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ;
4. ຮັບປະກັນ ຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ກັບການຂ້າສັດ, ທຳລາຍຊາກສັດ ແລະ ການຊົດເຊີຍ ຢູ່ ສປປ ລາວ.

## ໝວດທີ 2
## ການຂ້າສັດ ແລະ ທຳລາຍຊາກສັດ

**ມາດຕາ 6 ເງື່ອນໄຂ ຂອງສັດທີ່ຕ້ອງຂ້າ**

ສັດທີ່ຕ້ອງຂ້າ ມີເງື່ອນໄຂ ດັ່ງນີ້:

1. ສັດທີ່ເປັນພະຍາດ ທີ່ບໍ່ເຄີຍເກີດໃນ ສປປ ລາວ ມາກ່ອນ, ພະຍາດຕິດຕໍ່ຈາກສັດສູ່ຄົນ ຫຼື ພະຍາດລະບາດສັດທີ່ຮ້າຍແຮງ ຢູ່ໃນເຂດປອດພະຍາດສັດ ຕາມການກຳນົດ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ໃນແຕ່ລະໄລຍະ;
2. ສັດຢູ່ໃນເຂດແດງ ທີ່ຕິດເຊື້ອ ຫຼື ສົງໄສຕິດເຊື້ອພະຍາດສັດ ທີ່ຈຳເປັນຕ້ອງແຈ້ງ ຫຼື ຍັງບໍ່ທັນສະແດງອາການຂອງພະຍາດສັດ ລວມທັງສັດທີ່ລັກລອບ ເຂົ້າ-ອອກ ເຂດແດງ ຕາມການຕົກລົງເຫັນດີ ຂອງຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ.

**ມາດຕາ 7 ເງື່ອນໄຂ ຂອງຊາກສັດ ທີ່ຕ້ອງໄດ້ທຳລາຍ**

ຊາກສັດ ທີ່ຕ້ອງທຳລາຍ ມີເງື່ອນໄຂ ດັ່ງນີ້:

1. ຊາກສັດ ລວມທັງ ຊິ້ນສ່ວນສັດ ທີ່ຢູ່ໃນເຂດປອດພະຍາດສັດ ຫຼື ເຂດແດງ;
2. ອາຫານສັດ ແລະ ອຸປະກອນ ທີ່ມີສ່ວນກ່ຽວຂ້ອງ ຫຼື ສຳພັດກັບຊາກສັດ ທີ່ຢູ່ໃນເຂດປອດພະຍາດສັດ ຫຼື ເຂດແດງ;
3. ຊາກສັດ ລວມທັງ ຊິ້ນສ່ວນສັດ ທີ່ລັກລອບ ເຂົ້າ-ອອກ ເຂດປອດພະຍາດສັດ ຫຼື ເຂດແດງ.

**ມາດຕາ 8 ການແຈ້ງ ການຂ້າສັດ ແລະ ທຳລາຍຊາກສັດ**

ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ ຕ້ອງອອກແຈ້ງການຂ້າສັດ ແລະ ທຳລາຍຊາກສັດ ທີ່ໄດ້ປະກາດເປັນເຂດແດງແລ້ວ ພາຍໃນ ຊາວສີ່ ຊົ່ວໂມງ ຢ່າງເປັນລາຍລັກອັກສອນ ໃຫ້ອົງການປົກຄອງຂັ້ນບ້ານ ເພື່ອແຈ້ງໃຫ້ເຈົ້າຂອງສັດ ໃຫ້ຄວາມຮ່ວມມື ແລະ ດຳເນີນຕາມແຜນການຂ້າສັດ ແລະ ທຳລາຍຊາກສັດ ທີ່ໄດ້ກຳນົດ. ໃນແຈ້ງການດັ່ງກ່າວ ຕ້ອງກຳນົດກ່ຽວກັບ ຂອບເຂດ, ສະຖານທີ່, ຊະນິດສັດ, ວັນ ແລະ ເວລາ ທີ່ຈະດຳເນີນການຂ້າສັດ ແລະ ທຳລາຍຊາກສັດ ຢ່າງຈະແຈ້ງ.

ສຳລັບ ການແຈ້ງການ ຂ້າສັດ ແລະ ທຳລາຍຊາກສັດ ໃນເຂດປອດພະຍາດສັດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 9 ວິທີການ ແລະ ຂັ້ນຕອນການຂ້າສັດ**

ການຂ້າສັດ ຕ້ອງປະຕິບັດຕາມ ວິທີການ ແລະ ຂັ້ນຕອນ ດັ່ງນີ້:

1. ຊີ້ແຈງ ເຫດຜົນ ແລະ ຄວາມຈຳເປັນ ຂອງການຂ້າສັດ ພ້ອມທັງແຈ້ງໃຫ້ເຈົ້າຂອງສັດ ກັກ, ຂັງ, ຜູກ ຫຼື ມັດ ສັດຂອງຕົນໄວ້ ກ່ອນທີມງານຂ້າສັດ ເລີ່ມປະຕິບັດງານ;
2. ກະກຽມ ເຄື່ອງມື ແລະ ອຸປະກອນ ສຳລັບການຂ້າສັດ;
3. ກຳນົດ ສະຖານທີ່ຂ້າສັດໃຫ້ເໝາະສົມກັບຊະນິດສັດ ຢູ່ໃນເຂດແດງ ຫຼື ສະຖານທີ່ອື່ນ ຕາມການກຳນົດ ຂອງຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ;
4. ກຳນົດ ວິທີການຂ້າສັດ ໂດຍອີງຕາມ ຊະນິດສັດ, ຈຳນວນຂອງສັດ ແລະ ເງື່ອນໄຂທີ່ມີໃນຕົວຈິງ ຕາມ ຄຳແນະນຳ ຂອງກະຊວງກະສິກຳ ແລະ ປ່າໄມ້;
5. ບັນທຶກ ຈຳນວນ, ຊັ່ງ ຫຼື ປະເມີນ ນ້ຳໜັກຂອງສັດທີ່ຈະນຳໄປຂ້າ;
6. ດຳເນີນ ການຂ້າສັດ ໂດຍໃຊ້ເວລາສັ້ນທີ່ສຸດ ເທົ່າທີ່ຈະເປັນໄປໄດ້ ແລະ ໃຫ້ຖືກຕ້ອງຕາມຫຼັກສຸຂານາໄມ ແລະ ສະຫວັດດີການສັດ;
7. ສ້າງ ບົດບັນທຶກການຂ້າສັດ ຕາມແບບພິມ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

**ມາດຕາ 10 ວິທີການ ແລະ ຂັ້ນຕອນການທຳລາຍຊາກສັດ ແລະ ຂ້າເຊື້ອພະຍາດ**

ພາຍຫຼັງ ທີມງານຂ້າສັດ ແລະ ທຳລາຍຊາກສັດ ໄດ້ດຳເນີນການຂ້າສັດແລ້ວ ໃຫ້ນຳເອົາຊາກສັດ, ຊິ້ນສ່ວນສັດ ລວມທັງ ໄຂ່ ແລະ ນ້ຳນົມດິບ, ອາຫານສັດ, ເຄື່ອງມື, ວັດຖຸ ແລະ ອຸປະກອນທີ່ກ່ຽວຂ້ອງ ຫຼື ໄດ້ສຳຜັດກັບສັດທີ່ຖືກຂ້າ ໄປທຳລາຍ ແລະ/ຫຼື ຂ້າເຊື້ອພະຍາດ ຕາມວິທີການ ແລະ ຂັ້ນຕອນ ດັ່ງນີ້:

1. ຄັດເລືອກສະຖານທີ່ ທີ່ຈະທຳລາຍຊາກສັດ ຢູ່ໃນເຂດ ທີ່ຫ່າງໄກຈາກຊຸມຊົນພໍສົມຄວນ, ເປັນໂນນສູງ ແລະ ບໍ່ມີນ້ຳຖ້ວມຂັງ ໂດຍໃຫ້ຢູ່ໃນເຂດແດງ ຫຼື ສະຖານທີ່ອື່ນ ຕາມການກຳນົດ ຂອງຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ;
2. ຂົນສິ່ງໄປສະຖານທີ່ ທີ່ຈະທຳລາຍ ດ້ວຍພາຫະນະທີ່ຮັບປະກັນ ໂດຍບໍ່ໃຫ້ມີສິ່ງເສດເຫຼືອຕົກເຮ່ຍໃນເວລາຂົນສົ່ງ. ພາຫະນະດັ່ງກ່າວ ຕ້ອງໄດ້ລ້າງ, ອະນາໄມ ແລະ ຂ້າເຊື້ອພະຍາດ ພາຍຫຼັງການໃຊ້ງານແລ້ວ;
3. ຝັງ ຫຼື ເຜົາ ຫຼື ທັງເຜົາ ແລະ ຝັງ ຕາມແຕ່ລະກໍລະນີ ໂດຍອີງໃສ່ ຊະນິດ ແລະ ຈຳນວນ ຂອງສິ່ງທີ່ຈະຕ້ອງທຳລາຍ ແລະ ຂ້າເຊື້ອພະຍາດ ຕາມຄຳແນະນຳ ຂອງກະຊວງກະສິກຳ ແລະ ປ່າໄມ້;
4. ສ້າງ ບົດບັນທຶກ ກ່ຽວກັບ ການທຳລາຍຊາກສັດ ຕາມແບບພິມ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

**ມາດຕາ 11 ການສົ່ງບົດບັນທຶກ ແລະ ການສະຫຼຸບລາຍງານ ກ່ຽວກັບການຂ້າສັດ ແລະ ທຳລາຍຊາກສັດ**

ທີມງານຂ້າສັດ ແລະ ທຳລາຍຊາກສັດ ຕ້ອງສົ່ງບົດບັນທຶກ ກ່ຽວກັບ ການຂ້າສັດ ແລະ ການທຳລາຍຊາກສັດ ເປັນຢ່າງລະ ສີ່ ຊຸດ ທີ່ເຊັນຮັບຮູ້ໂດຍ ເຈົ້າຂອງສັດ, ນາຍບ້ານ ແລະ ທີມງານຂ້າສັດ ແລະ ທຳລາຍຊາກສັດ. ຊຸດທີໜຶ່ງ ສົ່ງໃຫ້ເຈົ້າຂອງສັດ, ຊຸດທີສອງ ສົ່ງໃຫ້ນາຍບ້ານ, ຊຸດທີສາມ ສົ່ງໃຫ້ ທີມງານຂ້າສັດ ແລະ ທຳລາຍຊາກສັດ ແລະ ຊຸດທີສີ່ ສົ່ງໃຫ້ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ.

ທີມງານຂ້າສັດ ແລະ ທຳລາຍຊາກສັດ ຕ້ອງສະຫຼຸບລາຍງານ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານຂ້າສັດ, ທຳລາຍຊາກສັດ ແລະ ຊົດເຊີຍ ໃຫ້ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ ຮັບຊາບ.

## ໝວດທີ 3
## ການຊົດເຊີຍ

**ມາດຕາ 12 ເງື່ອນໄຂ ຂອງການຊົດເຊີຍ**

ເງື່ອນໄຂ ຂອງການຊົດເຊີຍ ມີດັ່ງນີ້:

1. ແຈ້ງການຂ້າສັດ ຂອງຄະນະສະເພາະກິດຄວບຄຸມພະຍາດລະບາດຂອງພະຍາດສັດ;
2. ບົດບັນທຶກການຂ້າສັດ ແລະ ການທຳລາຍຊາກສັດ.

ຜູ້ທີ່ຈະໄດ້ຮັບການຊົດເຊີຍ ຕ້ອງມີຫຼັກຖານຢັ້ງຢືນວ່າ ເປັນເຈົ້າຂອງສັດ ແລະ ຊາກສັດ ທີ່ຖືກຂ້າ ແລະ ທຳລາຍ.

**ມາດຕາ 13 ການປະເມີນມູນຄ່າສັດທີ່ຖືກຂ້າ ແລະ ທຳລາຍ**

ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ ເປັນຜູ້ປະເມີນມູນຄ່າຂອງສັດທີ່ຖືກຂ້າ ແລະ ຜະລິດຕະພັນສັດ ທີ່ຖືກທຳລາຍ ໂດຍຄິດໄລ່ເປັນຫົວໜ່ວຍກິໂລກຣາມ. ສ່ວນລາຄາ ໃຫ້ອີງໃສ່ລາຄາຕາມທ້ອງຕະຫຼາດໃນເຂດດັ່ງກ່າວ ໃນວັນທີ່ດຳເນີນການຂ້າສັດ ແລະ ທຳລາຍຊາກສັດຕົວຈິງ.

**ມາດຕາ 14 ມູນຄ່າຂອງການຊົດເຊີຍ**

ມູນຄ່າຂອງການຊົດເຊີຍ ໃຫ້ຄິດໄລ່ມູນຄ່າຂອງການຊົດເຊີຍສັດທີ່ຖືກຂ້າ ແລະ ຜະລິດຕະພັນສັດທີ່ຖືກທຳລາຍ ໃຫ້ແກ່ເຈົ້າຂອງສັດ ຫ້າສິບ ສ່ວນຮ້ອຍ ຂອງມູນຄ່າ ຕາມລາຄາທີ່ຂາຍໃນທ້ອງຕະຫຼາດ ໃນໄລຍະທີ່ມີການດຳເນີນການຂ້າສັດ ແລະ ທຳລາຍຊາກສັດ.

**ມາດຕາ 15 ການຄົ້ນຄວ້າ ແລະ ສະເໜີ ຂໍການຊົດເຊີຍ**

ພາຍຫຼັງ ທີ່ໄດ້ມີການປະເມີນມູນຄ່າການຊົດເຊີຍ ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ ຄົ້ນຄວ້າ ຮູບການ ແລະ ວິທີການຊົດເຊີຍ ແລ້ວສະເໜີຕໍ່ຂະແໜງການກະສິກຳ ແລະ ປ່າໄມ້ ເພື່ອຄົ້ນຄວ້ານຳສະເໜີຕໍ່ລັດຖະບານ ພິຈາລະນາອະນຸມັດ.

**ມາດຕາ 16 ການເບີກຈ່າຍ ການຊົດເຊີຍ**

ພາຍຫຼັງ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຮັບມູນຄ່າການຊົດເຊີຍແລ້ວ ມອບໃຫ້ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ ເປັນຜູ້ຈັດຕັ້ງປະຕິບັດການຊົດເຊີຍ.

## ໝວດທີ 4
## ຄະນະສະເພາະກິດຄວບຄຸມ ການລະບາດຂອງພະຍາດສັດ

**ມາດຕາ 17 ຄະນະສະເພາະກິດຄວບຄຸມ ການລະບາດຂອງພະຍາດສັດ**

ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ ແມ່ນການຈັດຕັ້ງໜຶ່ງທີ່ບໍ່ປະຈຳການ ທີ່ຖືກແຕ່ງຕັ້ງໂດຍ ອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ສັດຕະວະແພດ ຕາມການປະກາດເຂດການລະບາດຂອງພະຍາດສັດ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ.

ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ ປະກອບດ້ວຍ:

1. ທີມງານຂ້າສັດ ແລະ ທຳລາຍຊາກສັດ;
2. ທີມງານຊົດເຊີຍ;
3. ທີມງານອື່ນ ຕາມການຕົກລົງຂອງອົງການຄຸ້ມຄອງວຽກງານການລ້ຽງສັດ ແລະ ການສັດຕະວະແພດ.

**ມາດຕາ 18 ທີມງານ ຂ້າສັດ ແລະ ທຳລາຍຊາກສັດ**

ທີມງານຂ້າສັດ ແລະ ທຳລາຍຊາກສັດ ຕ້ອງມີພະນັກງານວິຊາການທີ່ກ່ຽວຂ້ອງ ຂອງອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ຕາມແຕ່ລະຂັ້ນ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງ ເພື່ອເຮັດໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 9, 10 ແລະ 11 ຂອງ ດຳລັດສະບັບນີ້.

**ມາດຕາ 19 ທີມງານ ຊົດເຊີຍ**

ທີມງານຊົດເຊີຍ ຕ້ອງມີພະນັກງານວິຊາການທີ່ກ່ຽວຂ້ອງ ຂອງອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ, ຂະແໜງການການເງິນ, ຂະແໜງການແຜນການ ແລະ ການລົງທຶນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕາມແຕ່ລະຂັ້ນເຂົ້າຮ່ວມ ແລະ ປະຕິບັດການປະເມີນມູນຄ່າຂອງການຊົດເຊີຍ ດັ່ງນີ້:

1. ສັງລວມ ຈຳນວນສັດທີ່ຖືກຂ້າ ແລະ ຜະລິດຕະພັນສັດ ທີ່ຖືກທຳລາຍ ຊຶ່ງຕ້ອງຊົດເຊີຍ;
2. ຄິດໄລ່ມູນຄ່າການຊົດເຊີຍ;
3. ກວດກາ ແລະ ຢັ້ງຢືນ ເຈົ້າຂອງສັດ ທີ່ຈະໄດ້ຮັບການຊົດເຊີຍ;
4. ສະເໜີແຜນການຊົດເຊີຍ ໃຫ້ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ;
5. ດຳເນີນການເບີກຈ່າຍ ການຊົດເຊີຍ ໃຫ້ແກ່ເຈົ້າຂອງສັດ ທີ່ຖືກຜົນກະທົບ;
6. ສະຫຼຸບ ແລະ ລາຍງານກ່ຽວກັບ ການຊົດເຊີຍ ໃຫ້ແກ່ ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 20 ຂໍ້ຫ້າມ ສຳລັບເຈົ້າຂອງສັດ**

ຫ້າມເຈົ້າຂອງສັດ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ຊຸກເຊື່ອງສັດ, ລັກລອບ ນຳເອົາສັດ ເຂົ້າ-ອອກ ເຂດຄວບຄຸມພະຍາດລະບາດສັດ;
2. ຂ້າ, ຄົວ ແລະ ບໍລິໂພກ ສັດທີ່ເຈັບປ່ວຍ ຫຼື ຕາຍ ຍ້ອນພະຍາດລະບາດ;
3. ນຳເອົາຊາກສັດທີ່ຖືກທຳລາຍ ມາບໍລິໂພກ ຫຼື ຂາຍ;
4. ຊຸກເຊື່ອງ, ປອມແປງເອກະສານ, ສັບປ່ຽນຫຼັກຖານຂອງສັດ ແລະ ຜະລິດຕະພັນສັດ ທີ່ກ່ຽວຂ້ອງກັບການຂ້າສັດ, ການທຳລາຍຊາກສັດ ແລະ ການຊົດເຊີຍ;
5. ໃຊ້ຄວາມຮຸນແຮງ ແລະ ນາບຂູ່ ດ້ວຍວາຈາທີ່ບໍ່ເໝາະສົມ ຕໍ່ພະນັກງານ ຫຼື ເຈົ້າໜ້າທີ່;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 21 ຂໍ້ຫ້າມ ສໍາລັບພະນັກງານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງກັບວຽກງານ ຂ້າສັດ, ທໍາລາຍຊາກສັດ ແລະ ຊົດເຊີຍ ມີພຶດຕິກໍາໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ຕໍາແໜ່ງ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນ;
2. ຮ່ວມມືກັບເຈົ້າຂອງສັດ ສ້າງຂໍ້ມູນ ເພື່ອການຊົດເຊີຍ ທີ່ບໍ່ຖືກຕ້ອງ;
3. ກົດໜ່ວງ ຖ່ວງດຶງເອກະສານ, ປອມແປງເອກະສານ ຫຼື ອອກເອກະສານ ທີ່ບໍ່ຖືກຕ້ອງ;
4. ໃຫ້ ແລະ/ຫຼື ຮັບສິນບົນ ແລະ ນໍາໃຊ້ ງົບປະມານສໍາລັບການຊົດເຊີຍ ທີ່ບໍ່ຖືກຕ້ອງ ຕາມລະບຽບການ;
5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການຄຸ້ມຄອງ ແລະ ກວດກາ

**ມາດຕາ 22 ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ, ທໍາລາຍຊາກສັດ ແລະ ຊົດເຊີຍ**

ກະຊວງຊວງກະສິກໍາ ແລະ ປ່າໄມ້ ຮັບຜິດຊອບໂດຍກົງໃນການຄຸ້ມຄອງ ແລະ ກວດກາວຽກງານຂ້າສັດ, ທໍາລາຍຊາກສັດ ແລະ ຊົດເຊີຍ ແລະ ເປັນເຈົ້າການປະສານສົມທົບ ກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ, ທໍາລາຍຊາກສັດ ແລະ ຊົດເຊີຍ ປະກອບດ້ວຍ:

1. ກະຊວງກະສິກໍາ ແລະ ປ່າໄມ້;
2. ພະແນກກະສິກໍາ ແລະ ປ່າໄມ້ຂັ້ນແຂວງ;
3. ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງກະຊວງກະສິກໍາ ແລະ ປ່າໄມ້**

ກະຊວງກະສິກໍາ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນິຕິກໍາ ກ່ຽວກັບ ການຈັດຕັ້ງປະຕິບັດ ວຽກງານ ຂ້າສັດ, ທໍາລາຍຊາກສັດ ແລະ ຊົດເຊີຍ;
2. ໂຄສະນາ ເຜີຍແຜ່ນິຕິກໍາ ກ່ຽວກັບ ວຽກງານ ຂ້າສັດ, ທໍາລາຍຊາກສັດ ແລະ ຊົດເຊີຍ;
3. ແຕ່ງຕັ້ງ ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ ໃນກໍລະນີ ທີ່ມີການປະກາດເຂດລະບາດພະຍາດສັດ ຫຼາຍກວ່າ ໜຶ່ງແຂວງ, ນະຄອນຫຼວງ;
4. ຊີ້ນໍາ ວຽກງານ ຂ້າສັດ, ທໍາລາຍຊາກສັດ ແລະ ຊົດເຊີຍ;
5. ສ້າງ ຄູ່ມືແນະນໍາ ກ່ຽວກັບ ການຂ້າສັດແຕ່ລະປະເພດ, ການທໍາລາຍຊາກສັດ ແລະ ການຂ້າເຊື້ອພະຍາດ;
6. ຮັບ ແລະ ແກ້ໄຂຄໍາສະເໜີຂອງຜູ້ທີ່ໄດ້ຮັບຜົນກະທົບ;
7. ຄົ້ນຄວ້າ ແລະ ສະເໜີແຜນການຊົດເຊີຍຕໍ່ລັດຖະບານ;
8. ຕິດຕາມ ແລະ ກວດກາ ການເບີກຈ່າຍຄ່າຊົດເຊີຍ;
9. ປະສານ ສົມທົບກັບ ອົງການຈັດຕັ້ງ ແລະ ຂະແໜງການອື່ນ ກ່ຽວກັບ ການຂ້າສັດ, ທໍາລາຍຊາກສັດ ແລະ ການຊົດເຊີຍ;
10. ພົວພັນ ຮ່ວມມື ແລະ ປະສານສົມທົບກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບ ການຂ້າສັດ, ທໍາລາຍຊາກສັດ ແລະ ການຊົດເຊີຍ;
11. ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານ ຂ້າສັດ, ທໍາລາຍຊາກສັດ ແລະ ຊົດເຊີຍ ໃຫ້ລັດຖະບານ;
12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ**

ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ ເຜີຍແຜ່ນິຕິກຳ ກ່ຽວກັບ ການຈັດຕັ້ງປະຕິບັດ ວຽກງານ ຂ້າສັດ, ທຳລາຍຊາກສັດ ແລະ ຊົດເຊີຍ;
2. ຈັດຕັ້ງປະຕິບັດຄຳແນະນຳ ທາງດ້ານວິຊາການ ກ່ຽວກັບ ການຂ້າສັດ, ທຳລາຍຊາກສັດ ແລະ ການຊົດເຊີຍ ຂອງກະຊວງກະສິກຳ ແລະ ປ່າໄມ້;
3. ແຕ່ງຕັ້ງ ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ ໃນກໍລະນີ ທີ່ມີການປະກາດເຂດລະບາດພະຍາດສັດ ຫຼາຍກວ່າ ໜຶ່ງ ເມືອງ ພາຍໃນແຂວງ, ນະຄອນຫຼວງ;
4. ຕິດຕາມ, ກວດກາ ການປະຕິບັດບັນດາເງື່ອນໄຂ ແລະ ລະບຽບການ ກ່ຽວກັບ ການຂ້າສັດ, ທຳລາຍຊາກສັດ, ການຊົດເຊີຍ ແລະ ການຂ້າເຊື້ອພະຍາດ;
5. ຮັບ ແລະ ແກ້ໄຂຄຳສະເໜີ ຂອງຜູ້ທີ່ໄດ້ຮັບຜົນກະທົບ;
6. ລາຍງານ ກ່ຽວກັບ ການຂ້າສັດ, ທຳລາຍຊາກສັດ ແລະ ສະເໜີແຜນການຊົດເຊີຍ ຕໍ່ກະຊວງກະສິກຳ ແລະ ປ່າໄມ້;
7. ປະສານ ສົມທົບກັບ ອົງການຈັດຕັ້ງ ແລະ ຂະແໜງການອື່ນ ກ່ຽວກັບ ການຂ້າສັດ, ທຳລາຍຊາກສັດ ແລະ ການຊົດເຊີຍ ຢູ່ໃນທ້ອງຖິ່ນຕົນ;
8. ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານ ຂ້າສັດ, ທຳລາຍຊາກສັດ ແລະ ຊົດເຊີຍ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງຂັ້ນແຂວງ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດຄຳແນະນຳ ທາງດ້ານວິຊາການ ກ່ຽວກັບ ວຽກງານ ຂ້າສັດ, ທຳລາຍຊາກສັດ ແລະ ຊົດເຊີຍ;
2. ແຕ່ງຕັ້ງ ຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ ໃນກໍລະນີ ທີ່ມີການປະກາດເຂດລະບາດພະຍາດສັດ ພາຍໃນເມືອງ, ເທດສະບານ, ນະຄອນ;
3. ຮັບ ແລະ ແກ້ໄຂຄຳສະເໜີຂອງຜູ້ທີ່ໄດ້ຮັບຜົນກະທົບ;
4. ລາຍງານ ກ່ຽວກັບ ການຂ້າສັດ, ທຳລາຍຊາກສັດ ແລະ ສະເໜີແຜນການຊົດເຊີຍ ຕໍ່ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
5. ປະສານ ສົມທົບກັບ ອົງການຈັດຕັ້ງ ແລະ ຂະແໜງການອື່ນ ກ່ຽວກັບ ການຂ້າສັດ, ທຳລາຍຊາກສັດ ແລະ ການຊົດເຊີຍ ຢູ່ໃນຂອບເຂດເມືອງຂອງຕົນ;
6. ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານ ຂ້າສັດ, ທຳລາຍຊາກສັດ ແລະ ຊົດເຊີຍ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ອົງການປົກຄອງ ຂັ້ນເມືອງ;
7. ນຳໃຊ້ ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບ ອົງການຄຸ້ມຄອງ ແລະ ກວດກາ ວຽກງານ ຂ້າສັດ, ທຳລາຍຊາກສັດ ແລະ ຊົດເຊີຍ ໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 27 ເນື້ອໃນການກວດກາ**

ການກວດກາ ວຽກງານ ຂ້າສັດ, ທຳລາຍຊາກສັດ ແລະ ຊົດເຊີຍ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດ ເງື່ອນໄຂ ແລະ ລະບຽບການ ກ່ຽວກັບວຽກງານ ຂ້າສັດ, ທຳລາຍຊາກສັດ ແລະ ຊິດເຊີຍ;
2. ການປະຕິບັດໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງກັບ ການຂ້າສັດ, ທຳລາຍຊາກສັດ ແລະ ການຊິດເຊີຍ;
3. ການປະຕິບັດໜ້າທີ່ ກ່ຽວກັບ ການຂ້າສັດ, ທຳລາຍຊາກສັດ ແລະ ການຊິດເຊີຍ ຂອງຄະນະສະເພາະກິດຄວບຄຸມການລະບາດຂອງພະຍາດສັດ;
4. ການສ້າງ ແລະ ປະຕິບັດບັນດາ ມາດຕະການ, ແຜນການ ແລະ ວິທີການ ກ່ຽວກັບ ວຽກງານ ຂ້າສັດ, ທຳລາຍຊາກສັດ ແລະ ຊິດເຊີຍ.

**ມາດຕາ 28 ຮູບການ ການກວດກາ**

ການກວດກາ ວຽກງານຂ້າສັດ, ທຳລາຍຊາກສັດ ແລະ ຊິດເຊີຍ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາປົກກະຕິ ແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາ ອັນແນ່ນອນ;
2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າ ມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 29 ງົບປະມານ ສຳລັບ ການຂ້າສັດ, ທຳລາຍຊາກສັດ ແລະ ການຊິດເຊີຍ**

ງົບປະມານ ສຳລັບ ການຂ້າສັດ, ທຳລາຍຊາກສັດ ແລະ ການຊິດເຊີຍ ໃຫ້ນຳໃຊ້ງົບປະມານຂອງລັດ, ເງິນແຮລັດຖະບານ ແລະ ກອງທຶນຄຸ້ມຄອງໄພພິບັດຕາມແຕ່ລະຂັ້ນ.

**ມາດຕາ 30 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 31 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ພັນຄຳ ວິພາວັນ